*ຄະນະກຳມະການເສລີພາບທາງສາສະໜາລະຫວ່າງຊາດ ແຫ່ງ ສະຫະລັດອາເມຣິກາ (The U.S. Commission on International Religious Freedom ຫລື USCIRF) ແມ່ນບຸກຄົນທີ່ແຍກອອກມາຕ່າງຫາກ ແລະ ແຕກຕ່າງຈາກກະຊວງການຕ່າງປະເທດ. ຄະນະດັ່ງກ່າວ ໄດ້ຖືກສ້າງຕັ້ງຂຶ້ນໂດຍລັດຖະສະພາອາເມຣິກາ ເຊິ່ງໄດ້ດຳເນີນການກວດສອບ ສິດເສລີພາບທາງດ້ານສາສະໜາທົ່ວໂລກ ແລະ ໃຫ້ຄຳແນະນຳແນວທາງນະໂຍບາຍແກ່ປະທານ, ເລຂາຂອງລັດ ແລະ ລັດຖະສະພາ. USCIRF ໃຫ້ຄຳແນະນຳໂດຍນອນຢູ່ເທິງພື້ນຖານ ຄຳສັ່ງຕາມກົດໝາຍ ແລະ ມາດຕະຖານຂອງພວກເຮົາ ເຊິ່ງໄດ້ພົບເຫັນຢູ່ຕາມຖະແຫລງການສາກົນ ຂອງເອກະສານສິດທິມະນຸດ ແລະ ເອກະສານສາກົນອື່ນໆ. ບົດລາຍງານປະຈຳປີ 2015 ສະແດງໃຫ້ເຫັນເຖິງຄວາມສຸດຍອດຂອງການເຮັດວຽກໃນປີຜ່ານມາ ຂອງຄະນະກຳມະການ ແລະ ພະນັກງານມືອາຊີບ ໃນການຈັດການ ແລະ ຮວບຮວມເອກະສານລະເມີດສິດທິມະນຸດທົ່ວໂລກ ແລະ ໃຫ້ຄຳແນະນຳນະໂຍບາຍສູ່ເສລີພາບແກ່ລັດຖະບານສະຫະລັດອາເມຣິກາ. ບົດລາຍງານປະຈຳປີ 2015 ກວມເອົາໄລຍະເວລາແຕ່ວັນທີ 31 ມັງກອນ 2014 ເຖິງວັນທີ 31 ມັງກອນ 2015 ລວມທັງບາງກໍລະນີ ມີຫລາຍເຫດການສຳຄັນໄດ້ເກີດຂຶ້ນຫລັງຈາກໄລຍະເວລາດັ່ງກ່າວນີ້ ກໍໄດ້ກ່າວເຖິງເຊັ່ນດຽວກັນ.*

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ການຄົ້ນພົບທີ່ສຳຄັນ**: ລັດຖະບານຂອງພັກປະຊາຊົນປະຕິວັດລາວ (ພປປລາວ) ໄດ້ສືບຕໍ່ອະນຸຍາດໃຫ້ມີການລະເມີດສິດເສລີພາບຕໍ່ກຸ່ມຊົນເຜົ່າສາສະໜາສ່ວນໜ້ອຍ, ການລະເມີດສິດເສລີພາບທີ່ພົ້ນເດັ່ນທີ່ສຸດແມ່ນຢູ່ເຂດຫ່າງໄກສອກຫລີກ, ເຂດຊົນນະບົດ. ນອກຈາກນີ້ ຄວາມຫວາດລະແວງຂອງລັດຖະບານທີ່ມີຕໍ່ສາສະໜາຄຣິສນິກາຍໂປຣເຕສແຕນ ທີ່ເປັນຊາວຕາເວັນຕົກ ຫລື ຊາວອາເມຣິກັນ ໄດ້ສົ່ງຜົນກະທົບໃຫ້ມີການແບ່ງແຍກ, ການລະເມີດສິດເສລີພາບ ແລະ ການຈັບກຸມຊາວຄຣິສຕຽນທົ່ວປະເທດ, ໂດຍສະເພາະໃນແຂວງສະຫວັນນະເຂດ ທີ່ມີການລາຍງານມາຫລາຍຄັ້ງວ່າ ເຈົ້າໜ້າທີ່ທ້ອງຖິ່ນໄດ້ສັ່ງການໃຫ້ຊາວຄຣິສຕຽນປະຖິ້ມຄວາມເຊື່ອຖືຂອງເຂົາເຈົ້າ, ສ່ວນຊຸມຊົນສ່ວນໃຫຍ່ຂອງຊາວພຸດ ແມ່ນໄດ້ຮັບສິດເສລີພາບທາງສາສະໜາ ເຊັ່ນດຽວກັນກັບກຸ່ມຊົນເຜົ່າສາສະໜາສ່ວນໜ້ອຍ ເຊັ່ນ: ສາສະໜາຜີ, ບາຮາຍ ແລະ ຄາໂຕລິກ. ຢ່າງໃດກໍຕາມ ກຸ່ມຊົນເຜົ່າສ່ວນໜ້ອຍມີແນວໂນ້ມທີ່ຈະປະສົບກັບເຫດການຖືກແບ່ງແຍກ ແລະ ຖືກລະເມີດສິດເສລີພາບ ລວມທັງເສລີພາບທາງສາສະໜາ ເພີ່ມຂຶ້ນ. ອີງຕາມຄວາມກັງວົນດັ່ງກ່າວ, ໃນປີ 2015 USCIRF ຈະລົງພື້ນທີ່ປະເທດລາວອີກຄັ້ງຫລັງຈາກໄດ້ລົງໄປຄັ້ງທຳອິດໃນປີ 2009.

**ພື້ນຫລັງ**

ເຖິງແມ່ນວ່າ ລັດຖະທຳມະນູນລາວ ຈະປົກປ້ອງສິດເສລີພາບ ໃນການນັບຖືສາສະຫນາ ຫລື ຄວາມເຊື່ອ ກໍຕາມ ແຕ່ນະໂຍບາຍຕ່າງໆ ຍັງສົ່ງຜົນໃຫ້ສິດເສລີພາບທາງສາສະຫນາ ມີຂໍ້ຈຳກັດ. ຫລາຍກວ່າສອງສ່ວນສາມຂອງ ປະຊາກອນ ແມ່ນຊາວພຸດ, ໃນຂະນະທີ່ ເຊື່ອວ່າມີຊາວຄຣິສຕຽນຫນ້ອຍກວ່າສອງເປີເຊັນ. ສາສະຫນາຜີ, ການ ບູຊາບັນພະບູລຸດ ແລະ ຄວາມເຊື່ອຖືແບບດັ້ງເດີມອື່ນໆ ແມ່ນມີຢູ່ທົ່ວໄປໃນບັນດາຊົນຊາດຊົນເຜົ່າ ແລະ ມີຫລາຍ ກຸ່ມຊົນເຜົ່າສາສະຫນາສ່ວນຫນ້ອຍອື່ນໆອີກໃນປະເທດ.

ຂັ້ນຕອນການອະນຸມັດທີ່ຊັບຊ້ອນຈາກລັດຖະບານ ແມ່ນເປັນສິ່ງຈຳເປັນທີ່ສຸດສຳລັບການປະຕິບັດວຽກງານທາງ ສາສະຫນາ ແລະ ການກໍ່ສ້າງບ່ອນສັກກາລະບູຊາ. ສະຖານທີ່ປະຕິບັດວຽກງານທາງສາສະຫນາໃນປະເທດ ໄດ້ຮັບ ການປັບປຸງໄປແລ້ວບາງສ່ວນໃນຊຸມປີຜ່ານມາ ແຕ່ບໍ່ຄ່ອຍສະຫມ່ຳສະເຫມີ. ນັກສັງເກດການ ໄດ້ຕັ້ງຂໍ້ສັງເກດເຖິງ ຕົວເລກທີ່ຫລຸດລົງຂອງນັກໂທດທາງຄວາມຄິດ. ຢ່າງໃດກໍຕາມ ບາງກຸ່ມຊົນເຜົ່າສາສະຫນາສ່ວນຫນ້ອຍ ຍັງຄົງ ສືບຕໍ່ປະເຊີນຫນ້າກັບການຖືກລະເມີດສິດເສລີພາບ ຍ້ອນການບໍ່ປະຕິບັດຕາມຄວາມເຊື່ອທາງສາສະຫນາພຸດ. ໂດຍລວມແລ້ວ, ການນຳໃຊ້ກົດຫມາຍທີ່ແຕກຕ່າງແລະບໍ່ແນ່ນອນໃນພາກປະຕິບັດ ໄດ້ມີຄວາມຫມາຍໃຫ້ການປົກ ປ້ອງປະຊາຊົນບັນດາເຜົ່າແຕ່ພຽງເລັກຫນ້ອຍເທົ່ານັ້ນ.

ນອກຈາກນີ້, ຂໍ້ຈຳກັດຕ່າງໆ ກ່ຽວກັບສິດເສລີພາບໃນການນັບຖືສາສະຫນາຫລືຄວາມເຊື່ອ ຍັງເກີດຂຶ້ນໃນບ່ອນທີ່ ການເມືອງສ່ວນໃຫຍ່ຖືກຈຳກັດ. ປະຊາສັງຄົມດຳເນີນໄປໃນສະພາບແວດລ້ອມທີ່ຈຳກັດຫລາຍ, ປະຊາສັງຄົມ ແລະ ສື່ອິດສະຫລະ ໄດ້ສືບຕໍ່ຖືກລະເມີດສິດເສລີພາບ ແລະຖືກຈັບກຸມແບບບໍ່ມີເຫດຜົນ ຍ້ອນການໃຊ້ສິດເພື່ອຮຽກຮ້ອງ ເສລີພາບໃນການສະແດງອອກ ທາງສະມາຄົມ ຫລື ການຊຸມນຸມ. ຕົວຢ່າງການຫາຍຕົວໄປຢ່າງຫນ້າສົງໄສຂອງ ຫົວຫນ້າປະຊາສັງຄົມ ທ່ານ ສົມບັດ ສົມພອນ. ທ່ານ ສົມບັດ ເປັນທີ່ຮູ້ຈັກກັນດີໃນນາມຜູ້ຮຽກຮ້ອງສິດທິມະນຸດ ໄດ້ ຫາຍຕົວໄປຕັ້ງແຕ່ເດືອນທັນວາ ປີ 2012 ຫລັງຈາກຖືກຄວບຄຸມໂຕໂດຍເຈົ້າຫນ້າທີ່ຕຳຫລວດ ແລະ ລັດຖະບານກໍ ບໍ່ມີຂໍ້ມູນຊັດເຈນກ່ຽວກັບເບາະແສຂອງລາວ. ລັດຖະບານຍັງໄດ້ຄວບຄຸມສື່ສິ່ງພິມ ແລະ ສື່ກະຈາຍສຽງ ແລະ ເມື່ອ ບໍ່ດົນມານີ້ ໄດ້ເພີ່ມການຈຳກັດການສະແດງອອກທາງອິນເຕີເນັດຂຶ້ນອີກ, ມີການອອກຂໍ້ບັນຍັດກົດຫມາຍໃຫມ່ ວ່າ ດ້ວຍ ການວິພາກວິຈານລັດຖະບານ ຫລື ພັກ ຫລືການເຜີຍແຜ່ຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງທາງອອນໄລ.

**ເງື່ອນໄຂສິດເສລີພາບທາງດ້ານສາສະໜາ ປີ 2014-2015**

***ຂໍ້ຈຳກັດທາງກົດໝາຍກ່ຽວກັບກິດຈະກຳທາງສາສະໜາ:*** ການປົກປ້ອງສິດເສລີພາບໃນການນັບຖືສາສະໜາ ຫລື ຄວາມເຊື່ອ ທີ່ພົບເຫັນໃນລັດຖະທຳມະນູນລາວ ແມ່ນມີຄວາມຂັດແຍ່ງກັນ ເຊັ່ນ ໃນປີ 2002 ດຳລັດວ່າດ້ວຍການປະຕິບັດທາງສາສະໜາ ຫລື ເປັນທີ່ຮູ້ຈັກກັນໃນດຳລັດ 92 ແທນທີ່ຈະສ້າງຄວາມເຂັ້ມແຂງ ແລະ ປັບປຸງການປົກປ້ອງສິດເສລີພາບດັ່ງກ່າວ ໂດຍສະເພາະ ສຳລັບຊຸມຊົນສາສະໜາສ່ວນໜ້ອຍ ພັດເປັນການອະນຸຍາດໃຫ້ລັດຖະບານເຂົ້າໄປຄວບຄຸມ ແລະ ແຊກແຊງກິດຈະກຳທາງສາສະໜາທັງໝົດ. ເຊິ່ງປະກອບມີ: ການຮຽກຮ້ອງໃຫ້ກຸ່ມສາສະໜາທັງໝົດມີການລົງທະບຽນ, ຈຳກັດຂອບເຂດການຊັກຊວນໃຫ້ປ່ຽນສາສະໜາ ແລະ ຄວບຄຸມສື່ສິ່ງພິມ ໃບປິວຕ່າງໆ. ຄວາມຮຽກຮ້ອງຕ້ອງການພາຍໃຕ້ດຳລັດ 92 ແມ່ນມີຄວາມຫຍຸ້ງຍາກຫລາຍ ແລະ ບາງກຸ່ມສາສະໜາບໍ່ສາມາດລົງທະບຽນຕາມກົດໝາຍໄດ້ ສົ່ງຜົນໃຫ້ມີການຄັດຄ້ານເປັນຈຳນວນຫລາຍ.

***ການລະເມີດສິດເສລີພາບຕໍ່ຊົນກຸ່ມໜ້ອຍ:*** ການຈຳແນກຕໍ່ຊົນເຜົ່າສາສະໜາສ່ວນໜ້ອຍ ໂດຍສະເພາະແມ່ນຊາວຄຣິສຕຽນ ຍັງຄົງເປັນບັນຫາໃນຫລາຍພາກພື້ນຂອງປະເທດ. ບາງຊຸມຊົນພະຍາຍາມດຳເນີນການຢ່າງລະມັດລະວັງ ເພື່ອຫລີກລ່ຽງການຖືກລະເມີດສິດທິ ຈາກເຈົ້າໜ້າທີ່ທ້ອງຖິ່ນ ເພາະບໍ່ໄດ້ຮັບການຍອມຮັບຢ່າງເປັນທາງການຈາກລັດຖະບານ. ໃນຂະນະທີ່ຄວາມຫວາດລະແວງຕໍ່ສາສະໜາຄຣິສມີສູງທີ່ສຸດ, ພະນັກງານຂອງລັດຖະບານໃນທົ່ວປະເທດ ທີ່ບໍ່ນັບຖືສາສະໜາພຸດ ແມ່ນຈະບໍ່ຖືກໄວ້ວາງໃຈໃນລະດັບໜຶ່ງ. ຂໍ້ມູນລະອຽດກ່ຽວກັບການລະເມີດສິດທິຕໍ່ກຸ່ມຊົນເຜົ່າສ່ວນໜ້ອຍ ມັກຈະບໍ່ເປັນທີ່ຮັບຮູ້ໂດຍທົ່ວໄປ, ຂໍ້ມູນຂ່າວສານເຂົ້າ-ອອກປະເທດແມ່ນຢູ່ໃນການຄວບຄຸມຂອງລັດຖະບານລາວ ສະນັ້ນ ຈຶ່ງບໍ່ສາມາດເຊື່ອຖືໄດ້ວ່າ ການລະເມີດສິດເສລີພາບທາງສາສະໜາຈະບໍ່ເກີດຂຶ້ນແທ້.

ໃນປີ 2014 ການກະທຳທີ່ລະອຽດອ່ອນຂອງການແບ່ງແຍກຊາວຄຣິສຕຽນ ເກີດຂຶ້ນໃນໝູ່ບ້ານຫ່າງໄກສອກຫລີກໃນແຂວງສະຫວັນນະເຂດ ເຊິ່ງເປັນບ່ອນທີ່ຮັບຮູ້ກັນວ່າ ບໍ່ມີການອະນຸໂລມຜ່ອນຜັນ ໃຫ້ກຸ່ມຊົນເຜົ່າສາສະໜາສ່ວນໜ້ອຍ. ຕົວຢ່າງ ມີຜູ້ຍິງຄົນໜຶ່ງທີ່ຫາກໍ່ປ່ຽນໄປນັບຖືສາສະໜາຄຣິສໄດ້ເກີດມີການເຈັບປ່ວຍ ແລະ ເມື່ອລາວໄດ້ເສຍຊີວິດ ໃນເດືອນມິຖຸນາ 2014, ຄອບຄົວຂອງລາວໄດ້ຮັບການອະນຸມັດຈາກນາຍບ້ານ ໃຫ້ປະກອບພິທີສົບຕາມຮີດຄອງຂອງສາສະໜາຄຣິສ ແຕ່ຕໍ່ມາການອະນຸມັດດັ່ງກ່າວໄດ້ຖືກຍົກເລີກ ແລະ ຄອບຄົວຂອງລາວໄດ້ຖືກບັງຄັບໃຫ້ປະກອບພິທີຊາປະນະກິດຕາມສາສະໜາພຸດ. ນອກຈາກນີ້ ຕຳຫລວດຍັງໄດ້ຈັບກຸມບາດຫລວງ ແລະ ຊາວຄຣິສຄົນອື່ນອີກ 4 ຄົນ ໃນຂໍ້ຫາ ມີສ່ວນຮ່ວມໃນການຕາຍຂອງຜູ້ຍິງຄົນດັ່ງກ່າວ. ໃນເດືອນສິງຫາ 2014 ຈຶ່ງໄດ້ຄົ້ນພົບວ່າ ຊາວຄຣິສຕຽນທັງຫ້າບໍ່ມີຄວາມຜິດທີ່ຈະປະຫານ. ເຖິງວ່າຈະຫລຸດພົ້ນຄວາມຜິດໄປແລ້ວກໍຕາມ, ພວກເຂົາທັງຫ້າຍັງຄົງຢູ່ໃນຄວາມດູແລຂອງເຈົ້າໜ້າທີ່ ແລະ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍໃໝ່ໃນເດືອນກຸມພາ 2015, ເມື່ອສານຊັ້ນຕົ້ນ ຕັດສິນໃຫ້ພວກເຂົາມີຄວາມຜິດ ໃນຂໍ້ຫາຈ່າຍຢາໂດຍບໍ່ມີໃບອະນຸຍາດ ເຊິ່ງພົວພັນກັບການເສຍຊີວິດຂອງຜູ້ຍິງຄົນດັ່ງກ່າວ. ນອກຈາກຄ່າໃຊ້ຈ່າຍແລ້ວ ພວກເຂົາທັງຫ້າໄດ້ໃຫ້ການປະຕິເສດການຈ່າຍຢາ

ໃຫ້ຜູ້ຍິງຄົນນັ້ນ ໂດຍລະບຸວ່າ ພວກເຂົາພຽງແຕ່ສວດມົນອະທິຖານຢູ່ທາງຂ້າງລາວເທົ່ານັ້ນ. ຕໍ່ມາທັງຫ້າຄົນກໍໄດ້ຮັບການຄຸມຂັງ ແລະ ປັບໃຫມ.

ນອກຈາກນີ້, ໃນຊ່ວງທ້າຍເດືອນກັນຍາ 2014, ຢູ່ແຂວງສະຫວັນນະເຂດເຊັ່ນດຽວກັນ, ບາດຫລວງຄຣິສຕຽນ ແລະ ນັກບວດຫົກຄົນ ໄດ້ຖືກຈັບກຸມ ຫລັງຈາກຮັບປະກອບພິທີກໍາຢູ່ທີ່ເຮືອນຂອງບາດຫລວງ. ມີລາຍງານວ່າ ເຈົ້າຫນ້າທີ່ທ້ອງຖິ່ນ ບ້ານ ບູ່ຄໍາ ໄດ້ຫ້າມບໍ່ໃຫ້ມີການເຕົ້າໂຮມປະກອບພິທີກໍາຂອງຊາວຄຣິສຕຽນ ແລະ ໃຊ້ຂໍ້ຫ້າມດັ່ງກ່າວມາອ້າງ ເພື່ອການຈັບກຸມຊາວຄຣິສຕຽນທັງ 7 ຄົນ, ພວກເຂົາໄດ້ເຂົ້າມາຢູ່ພາຍໃຕ້ຄວາມດູແລຂອງເຈົ້າຫນ້າທີ່ ເປັນເວລາ 1 ອາທິດ ແລ້ວຈຶ່ງຄ່ອຍປ່ອຍໂຕອອກມາ.

ໃນປີ 2014 ອີກເຊັ່ນດຽວກັນ, ລັດຖະບານສູນກາງໄດ້ປະກາດຫ້າມບໍ່ໃຫ້ມີການສະເຫລີມສະຫລອງ ແລະ ປະກອບພິທີກໍາຕ່າງໆໃນມື້ບຸນ ຄຣິສມາສ. ການເຄື່ອນໄຫວດັ່ງກ່າວ ໄດ້ຮັບການພິຈາລະນາ ແລະ ມຸ່ງເນັ້ນເປົ້າຫມາຍໂດຍກົງໄປທີ່ຊົນເຜົ່າມົ້ງ, ຊາວຄຣິສຕຽນ ເຊິ່ງເປັນເປົ້າຫມາຍທີ່ຖືກລະເມີດສິດເສລີພາບ ຈາກລັດຖະບານມາຫລາຍທົດສະວັດ.

ນອກນັ້ນ ຍັງມີລາຍງານຕະຫລອດປີ 2014 ກ່ຽວກັບຄອບຄົວຊາວຄຣິສຕຽນທີ່ຖືກບັງຄັບໃຫ້ອອກຈາກເຮືອນຂອງຕົນ ເພາະປະຕິເສດທີ່ຈະປະຖິ້ມສາສະຫນາຄຣິສ. 6 ຄອບຄົວຊາວຄຣິສຕຽນ ໄດ້ອອກຈາກເຮືອນຂອງຕົນ ໃນແຂວງສະຫວັນນະເຂດ ຍ້ອນທົນແຮງກົດດັນຈາກຫມູ່ບ້ານທີ່ຈະໃຫ້ປ່ຽນໄປນັບຖືສາສະຫນາພຸດບໍ່ໄດ້, ແລະ ອີກ 6 ຄອບຄົວເຜົ່າມົ້ງທີ່ນັບຖືສາສະຫນາຄຣິສ ໃນແຂວງບໍລິຄໍາໄຊ ຖືກຂັບໄລ່ອອກຈາກຫມູ່ບ້ານ ເພາະປະຕິເສດທີ່ຈະປະຖິ້ມສາສະຫນາຄຣິສ ແລະ ມານັບຖືສາສະຫນາຜີ.

**ນະໂຍບາຍຂອງສະຫະລັດອາເມຣິກາ**

ສ.ປ.ປ.ລາວ ແມ່ນຫນຶ່ງໃນບັນດາປະເທດຄອມມູນິດທີ່ຍັງເຫລືອຢູ່ໃນໂລກນີ້ ແລະ ຍຶດເອົາຫລາຍໆການຊີ້ນໍາຈາກປະເທດເພື່ອນບ້ານ ຫວຽດນາມ ເຊິ່ງເປັນປະເທດຄອມມູນິດ ແລະ ເປັນພັນທະມິດທີ່ໃກ້ຊິດ, ມີຫລາຍຊ່ອງທາງການຮ່ວມມືລະຫວ່າງສອງປະເທດ ແລະ ສາສະຫນາ. ການຮ່ວມມືກ່ຽວກັບບັນຫາສາສະຫນາ ໄດ້ເລີ່ມຕົ້ນໃນປີ 2002 ໄດ້ມີການລົງນາມໃນຂໍ້ຕົກລົງຮ່ວມມືກັນ ກ່ຽວກັບການສາສະຫນາ ແລະ ໃນປີ 2014 ສ.ປ.ປ.ລາວ ແລະ ຫວຽດນາມ ໄດ້ລົງນາມສັນຍາກັນອີກຄັ້ງ ວ່າຈະຮ່ວມມືກັນແບບນີ້ໄປຈົນຮອດປີ 2020.

ແຕກຕ່າງຈາກປະເທດຫວຽດນາມ ແລະ ປະເທດກໍາປູເຈຍ, ຄວາມສໍາພັນລະຫວ່າງລາວ ແລະ ອາເມຣິກາ ບໍ່ໄດ້ຖືກຕັດຂາດຈົນຫມົດ ໃນຊ່ວງສົງຄາມຫວຽດນາມ, ແຕ່ຄວາມສໍາພັນຖືກລົດລະດັບລົງ ແລະ ມີຄວາມເຄັ່ງຕຶງໃນຊ່ວງເວລານີ້. ໂດຍສະເພາະຫລັງຈາກ ການປະຕິວັດຂອງພັກຄອມມູນິດ ໃນປີ 1975, ຄວາມສໍາພັນໄດ້ຮັບການ

ປັບປຸງນັບແຕ່ນັ້ນມາ, ແຕ່ການກະທຳບໍ່ດີຢ່າງຕໍ່ເນື່ອງຂອງລັດຖະບານລາວ ຕໍ່ຊົນເຜົ່າມົ້ງ ແມ່ນຕົ້ນເຫດຂອງຄວາມເຄັ່ງຕຶງຕະຫລອດມາ. ທັງການບໍລິຫານ ແລະ ສະພານິຕິບັນຍັດ ໄດ້ຍົກຄວາມເປັນຫ່ວງເປັນໃຍຕໍ່ບັນຫານີ້ມາສະເໝີ. ລັດຖະບານລາວ ໄດ້ເຝົ້າຕິດຕາມຊົນເຜົ່າມົ້ງທີ່ມີການພົວພັນກັບປະເທດສະຫະລັດອາເມຣິກາ ຢູ່ຕະຫລອດ. ຊົນເຜົ່າມົ້ງຫລາຍພັນຄົນໄດ້ຮັບການຝຶກອົບຮົມ ແລະ ປະກອບອາວຸດຈາກສະຫະລັດອາເມຣິກາ ແລະໄດ້ຕໍ່ສູ້ເພື່ອປ້ອງກັນບໍ່ໃຫ້ມີການປະຕິວັດ ຂອງພັກຄອມມູນິດ ໃນລະຫວ່າງສົງຄາມຫວຽດນາມ, ຈຳນວນຫລວງຫລາຍກໍໄດ້ປົບໜີໄປປະເທດໄທ ໄປຢູ່ໃນຄ້າຍອົບພະຍົບ, ບາງຈຳນວນກໍໄດ້ຖືກສົ່ງກັບປະເທດລາວ. ປະເທດສະຫະລັດອາເມຣິກາ ໄດ້ອົບພະຍົບຜູ້ລີ້ໄພຊົນເຜົ່າມົ້ງ ປະມານ 250,000 ຄົນເຂົ້າປະເທດ ແລະ ຍັງຄົງສືບຕໍ່ ຊຸກຍູ້ໃຫ້ ສ.ປ.ປ.ລາວ ມີການປັບປຸງຄວາມໂປ່ງໃສກ່ຽວກັບເງື່ອນໄຂ ຂອງຜູ້ທີ່ກັບມາຈາກປະເທດໄທ ແລະດຳເນີນການຕາມນະໂຍບາຍ ແລະ ການປະຕິບັດ ເພື່ອຮັບປະກັນວ່າ ຊົນເຜົ່າມົ້ງ ຈະບໍ່ມີຄວາມຢ້ານກົວວ່າຈະຖືກເອົາປຽບອີກຕໍ່ໄປ.

ນັບຕັ້ງແຕ່ການຟື້ນຟູ ການພົວພັນທາງດ້ານການທູດ ຢ່າງເຕັມຮູບແບບກັບປະເທດລາວໃນປີ 1992, ປະເທດສະຫະລັດອາເມຣິກາ ໄດ້ຄ່ອຍໆຂະຫຍາຍ ການມີສ່ວນຮ່ວມກັບປະເທດລາວ. ການພົວພັນສອງຝ່າຍຈະດຳເນີນການໂດຍຜ່ານຫລາຍກົນໄກ, ລວມທັງການເຈລະຈາສອງຝ່າຍ ສະຫະລັດອາເມຣິກາ - ສ.ປ.ປ.ລາວ ແລະ ອື່ນໆໂດຍສຸມໃສ່ຂະແໜງການສະເພາະເຊັ່ນ: ການຄ້າ ຫລື ການລົງທຶນ. ການມີສ່ວນຮ່ວມນີ້ ໄດ້ຂະຫຍາຍຕື່ມອີກໃນປີຜ່ານມາ ໂດຍຜ່ານການສະໜັບສະໜູນຂອງສະຫະລັດອາເມຣິກາ ຕໍ່ຄວາມຄິດລິເລີ່ມແຖບລຸ່ມແມ່ນ້ຳຂອງ (LMI), ຂໍ້ຕົກລົງ ການຮ່ວມມືລະຫວ່າງ ສະຫະລັດອາເມຣິກາ, ກຳປູເຈຍ, ລາວ, ໄທ, ຫວຽດນາມ ແລະ ມຽນມາວ່າຈະໃຫ້ຄວາມຮ່ວມມືໃນຂົງເຂດຕ່າງໆເຊັ່ນ: ສິ່ງແວດລ້ອມ, ສຸຂະພາບ, ການສຶກສາ ແລະ ການພັດທະນາພື້ນຖານໂຄງລ່າງ ເຊັ່ນດຽວກັນກັບແມ່ຍິງ ແລະ ບັນຫາບົດບາດຍິງຊາຍ.

ສະຫະລັດອາເມຣິກາໃຫ້ຄວາມຊ່ວຍເຫລືອ ດ້ານການຕ່າງປະເທດກັບ ສ.ປ.ປ.ລາວ ໃນຫລາຍຂະແໜງການສຳຄັນເຊັ່ນ: ສຸຂະພາບຂອງປະຊາຊົນ, ການປ່ຽນແປງສະພາບແວດລ້ອມ ແລະ ດິນຟ້າອາກາດ, ການຂະຫຍາຍຕົວທາງເສດຖະກິດ ແລະ ການຄ້າ, ສັນຕິພາບ ແລະ ຄວາມປອດໄພ, ລວມທັງການເກັບກູ້ລະເບີດທີ່ບໍ່ທັນແຕກ (ຈາກໄລຍະສົງຄາມຫວຽດນາມ). ສຳລັບງົບປະມານປີ 2016, ກະຊວງການຕ່າງປະເທດ, ອົງການພັດທະນາລະຫວ່າງປະເທດ ຂອງສະຫະລັດອາເມຣິກາ ແລະ ບັນດາອົງການທີ່ກ່ຽວຂ້ອງ ກຳລັງຮ້ອງຂໍເງິນທຶນໂດຍຜ່ານບັນຊີດັ່ງຕໍ່ໄປນີ້: ຊ່ວຍເຫລືອເພື່ອການພັດທະນາ ($11,100,000), ຄວບຄຸມຢາເສບຕິດລະຫວ່າງປະເທດ ($1,000,000), ການສຶກສາການທະຫານ ແລະ ການຝຶກອົບຮົມລະຫວ່າງປະເທດ ($450,000) ແລະການເງິນທະຫານຕ່າງປະເທດ ($200,000). ການຮ້ອງຂໍດັ່ງກ່າວຍັງປະກອບດ້ວຍກອງທຶນສຳລັບສະພາບແວດລ້ອມທີ່ກ່ຽວຂ້ອງ, ຄວາມສາມາດໃນການກໍ່ສ້າງ ໃນບັນດາປະເທດລຸ່ມແມ່ນ້ຳຂອງ.

ໃນປີ 2014, ສະຫະລັດອາເມຣິກາ ໄດ້ເປີດສະຖານທູດຫລັງໃຫມ່ຂອງຕົນ ໃນນະຄອນຫລວງວຽງຈັນ, ສ່ວນສະຖານທູດຫລັງກ່ອນຫນ້ານີ້ ຈະຖືກໃຊ້ເປັນເຮືອນພັກຂອງນັກການທູດອາເມຣິກາ.

ໃນປີ 2016, ສ.ປ.ປ.ລາວ ໄດ້ຖືກກໍານົດໃຫ້ເປັນປະທານ ສະມາຄົມ ປະຊາຊາດ ແຫ່ງ ອາຊີຕາເວັນອອກສ່ຽງໃຕ້ (ອາຊຽນ), ສະຫະລັດອາເມຣິກາເປັນຜູ້ມີສ່ວນຮ່ວມກັບພາກພື້ນອາຊຽນ ແລະ ການປະຊຸມສຸດຍອດອາຊີຕາເວັນອອກ. ນໍາໄປສູ່ໄລຍະເວລາຂະຫຍາຍຄວາມສົນອົກສົນໃຈ ຂອງພາກພື້ນແລະສາກົນ ຕໍ່ປະເທດລາວ, ສະຫະລັດອາເມຣິກາຢູ່ໃນຕໍາແຫນ່ງທີ່ຈະໃຊ້ປະໂຫຍດຈາກອິດທິພົນຂອງຕົນ ຊຸກຍູ້ໃຫ້ ສ.ປ.ປ.ລາວ ປັບປຸງເງື່ອນໄຂ ສິດເສລີພາບທາງສາສະຫນາ ແລະ ສິດທິມະນຸດທີ່ກ່ຽວຂ້ອງ.

**ຄໍາແນະນໍາ:**

USCIRF ແນະນໍາວ່າ ນອກເຫນືອໄປຈາກ ການເຊື່ອມໂຍງຄວາມກັງວົນກ່ຽວກັບສິດເສລີພາບທາງສາສະຫນາເຂົ້າໄປໃນວາລະກອງປະຊຸມ ຮ່ວມມືສອງຝ່າຍຂອງຕົນ ໃນເວລາທີ່ມີການພົວພັນ ກັບລັດຖະບານຂັ້ນສູນກາງ ແລະອໍານາດການປົກຄອງແຂວງຂອງລາວແລ້ວ, ລັດຖະບານສະຫະລັດອາເມຣິກາຄວນຈະ:

- ເລີ່ມກົນໄກສິດທິມະນຸດຢ່າງເປັນທາງການ ຄ້າຍຄືກັນກັບບົດສົນທະນາເລື່ອງສິດທິມະນຸດ ທີ່ມີຢູ່ແລ້ວ ຂອງສະຫະລັດ ກັບ ມຽນມາແລະຫວຽດນາມ ແລະ ກຸ່ມເຮັດວຽກຂອງສະຫະພາບເອີຣົບ ກ່ຽວກັບສິດທິມະນຸດ ແລະ ການປົກຄອງ ກັບ ສ.ປ.ປ.ລາວ ເພື່ອທີ່ຈະຢູ່ ຢ່າງສະຫມໍ່າສະເຫມີ ແລະ ຕໍ່ເນື່ອງກັບບັນຫາຂອງລັດຖະບານລາວ ເຊັ່ນ ການແບ່ງແຍກເຊື້ອຊາດ ແລະ ສາສະຫນາ, ການທໍລະມານ ແລະ ການປິ່ນປົວພະຍາດອື່ນໆໃນຄຸກ, ການຈັບກຸມທີ່ຜິດກົດຫມາຍ ແລະ ການກັກຂັງ, ຄວາມບົກຜ່ອງຂອງຂະບວນການຍຸດຕິທໍາ ແລະ ຕຸລາການທີ່ເປັນກາງ.
- ສືບຕໍ່ດໍາເນີນການກັບລັດຖະບານລາວ ກ່ຽວກັບກໍລະນີສະເພາະ ຂອງການລະເມີດສິດເສລີພາບທາງສາສະຫນາ ລວມທັງຈໍາກັດການໃຊ້ອໍານາດຂັບໄລ່ ຫລື ການບັງຄັບໃຫ້ຍົກເລີກການປະຕິບັດຕາມຄວາມເຊື່ອຖື ແລະ ເນັ້ນຫນັກຄວາມສໍາຄັນຂອງການດໍາເນີນງານ ການບັງຄັບໃຊ້ ແລະ ການຕີລາຄາໃຫ້ສອດຄ່ອງກັບລະບຽບກົດຫມາຍ ຂອງລັດຖະບານສູນກາງແລະເຈົ້າຫນ້າທີ່ທ້ອງຖິ່ນ.
- ສະຫນັບສະຫນູນໂຄງການຊ່ວຍເຫລືອດ້ານວິຊາການ ທີ່ເສີມສ້າງຕາມເປົ້າຫມາຍຂອງການປົກປ້ອງສິດເສລີພາບທາງສາສະຫນາ, ສິດທິມະນຸດ ແລະ ກຸ່ມຊົນເຜົ່າຫນ້ອຍ ໃນນັ້ນລວມມີ: ກົດຫມາຍໂຄງການ ແລະ ການແລກປ່ຽນທາງກົດຫມາຍ ທີ່ສຸມໃສ່ການແກ້ໄຂດໍາລັດ 92, ການຝຶກອົບຮົມກ່ຽວກັບສິດທິມະນຸດ, ລະບຽບຂອງກົດຫມາຍ ແລະ ສິດເສລີພາບທາງສາສະຫນາ, ຄວາມອົດທົນຂອງຕໍາຫລວດລາວ ແລະກອງກໍາລັງຮັກສາຄວາມປອດໄພ, ຜູ້ນໍາທາງສາສະຫນາ, ເຈົ້າຫນ້າທີ່ທ້ອງຖິ່ນ, ທະນາຍຄວາມ ແລະ ຜູ້

ພິພາກສາ, ສ້າງຄວາມເຂັ້ມແຂງໃຫ້ກຸ່ມປະຊາສັງຄົມລາວ ແລະ ດໍາເນີນວຽກການກຸສົນທາງດ້ານການແພດ ແລະ ກິດຈະກໍາການພັດທະນາ.

- ສືບຕໍ່ສອບຖາມເບາະແສກ່ຽວກັບ ທ່ານ ສົມບັດ ສົມພອນ ເພື່ອໃຫ້ຮູ້ວ່າ ລັດຖະບານລາວ ບໍ່ມີຄວາມສາມາດໃຫ້ຂໍ້ມູນໃດໆຈາກການສືບສວນຂອງເຂົາເຈົ້າ. ການຫາຍຕົວໄປຂອງບຸກຄົນດັ່ງກ່າວສະແດງໃຫ້ເຫັນເຖິງພາບລວມ ການເຂົ້າເຖິງປະຊາສັງຄົມ ແລະ ສິດທິຂອງແຕ່ລະບຸກຄົນ.
- ກວດກາໃຫ້ແນ່ໃຈວ່າ ຕໍາຫລວດລາວ ແລະ ເຈົ້າຫນ້າທີ່ຮັກສາຄວາມປອດໄພທີ່ມີສ່ວນຮ່ວມໃນການຝຶກອົບຮົມ ຫລື ໂຄງການການຊ່ວຍເຫລືອທາງດ້ານວິຊາການ ເພື່ອຢັ້ງຢືນວ່າ ພວກເຂົາບໍ່ໄດ້ມີສ່ວນກ່ຽວຂ້ອງກັບການລະເມີດສິດທິມະນຸດ ແລະ ປະຕິເສດການຝຶກອົບຮົມຂອງສະຫະລັດອາເມຣິກາ, ການຂໍວີຊ່າ, ການຊ່ວຍເຫລືອຫນ່ວຍງານຫລືບຸກຄະລາກອນທີ່ພົບວ່າມີສ່ວນຮ່ວມໃນຮູບແບບຂອງການລະເມີດສິດທິມະນຸດ ລວມທັງສິດເສລີພາບທາງສາສະຫນາ ແລະ
- ຊຸກຍູ້ໃຫ້ຄະນະກໍາມະການກະຈາຍສຽງ ເພື່ອໃຫ້ມີການສະຫນັບສະຫນູນທຶນໃຫ້ພຽງພໍ, ເຊັ່ນ ສຽງຂອງອາເມຣິກາ ແລະ ວິທະຍຸອອກອາກາດ ລາວເອເຊຍເສລີ ແລະ ເພີ່ມຄວາມພະຍາຍາມ ເພື່ອເປີດຊ່ອງທາງການຮັບຮູ້ຂໍ້ມູນຂ່າວສານຕ່າງໆໃນ ສ.ປ.ປ.ລາວ.